ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 202 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 31 ກໍລະກົດ 2018

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 084/ສພຊ, ລົງວັນທີ 14 ມິຖຸນາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 04/ຄປຈ, ລົງວັນທີ 12 ກໍລະກົດ 2018.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 084 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 14 / 06 / 18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ
## (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ (ສະບັບປັບປຸງ) ໃນວາລະກອງປະຊຸມ ຕອນເຊົ້າ, ວັນທີ 14 ມິຖຸນາ 2018.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 43 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 14 ມິຖຸນາ 2018

# ກົດໝາຍ
# ວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບ, ພັນທະ, ມາດຕະຖານ, ຂັ້ນ, ຊັ້ນ, ຕຳແໜ່ງ, ນະໂຍບາຍ, ຂໍ້ຫ້າມ, ການຍ້ອງຍໍ ແລະ ການລົງວິໄນ ຕໍ່ນາຍທະຫານ ເພື່ອຮັບປະກັນການກໍ່ສ້າງ, ນຳພາ, ບັນຊາ, ຄຸ້ມຄອງ ແລະ ກວດກາການເຄື່ອນໄຫວວຽກງານຂອງນາຍທະຫານ ແນໃສ່ເຮັດໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ ແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ມີແບບແຜນທັນສະໄໝ, ເປັນກຳລັງຫຼັກແຫຼ່ງ, ເປັນເຈົ້າການໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 ນາຍທະຫານກອງທັບປະຊາຊົນລາວ**

ນາຍທະຫານກອງທັບປະຊາຊົນລາວ ແມ່ນພະນັກງານຂອງພັກ ແລະ ລັດ ທີ່ມີຊັ້ນ ແຕ່ຊັ້ນຮ້ອຍຕີ ເຖິງຊັ້ນພົນເອກ ໂດຍມີເຄື່ອງໝາຍຊັ້ນ, ເຄື່ອງໝາຍທຽບຊັ້ນ, ເຄື່ອງໝາຍເຫຼົ່າຮົບ, ເຄື່ອງໝາຍເຫຼົ່າທັບ ແລະ ເຄື່ອງແບບສະເພາະ ຊຶ່ງລັດຖະບານເປັນຜູ້ກຳນົດ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຂດທະຫານ** ໝາຍເຖິງ ການແບ່ງພື້ນທີ່ປ້ອງກັນຊາດ ລວມທັງກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ;
2. **ຂັ້ນນາຍທະຫານ** ໝາຍເຖິງ ຂັ້ນນາຍຮ້ອຍ, ຂັ້ນນາຍພັນ ແລະ ຂັ້ນນາຍພົນ;

3. **ຊັ້ນນາຍທະຫານ** ໝາຍເຖິງ ຊັ້ນ ຮ້ອຍຕີ, ຮ້ອຍໂທ, ຮ້ອຍເອກ, ພັນຕີ, ພັນໂທ, ພັນເອກ, ພົນຈັດຕະວາ, ພົນຕີ, ພົນໂທ ແລະ ພົນເອກ;

4. **ການປະດັບຊັ້ນ** ໝາຍເຖິງ ການມອບຊັ້ນ ໃຫ້ຜູ້ທີ່ຮຽນຈົບ ໂຮງຮຽນນາຍທະຫານ ແລະ ຜູ້ທີ່ມີຜົນງານດີເດັ່ນ;

5. **ການປະດັບທຽບຊັ້ນ** ໝາຍເຖິງ ການມອບທຽບຊັ້ນ ໃຫ້ຜູ້ທີ່ຮຽນຈົບ ວິຊາສະເພາະ ນອກກອງທັບ;

6. **ການເລື່ອນຊັ້ນ** ໝາຍເຖິງ ການຂຶ້ນຊັ້ນ ສູງກວ່າຊັ້ນເກົ່າ ໃຫ້ຜູ້ທີ່ເຮັດໜ້າທີ່ນຳພາບັນຊາ, ຜູ້ທີ່ໄດ້ຮຽນຈົບຈາກໂຮງຮຽນນາຍທະຫານ ທັງພາຍໃນ ແລະ ຕ່າງປະເທດ;

7. **ການເລື່ອນທຽບຊັ້ນ** ໝາຍເຖິງ ການຂຶ້ນທຽບຊັ້ນສູງກວ່າຊັ້ນເກົ່າ ໃຫ້ຜູ້ເຮັດໜ້າທີ່ວິຊາສະເພາະຕ່າງໆ, ຜູ້ບໍ່ໄດ້ເຮັດໜ້າທີ່ນຳພາ, ບັນຊາ ແລະ ບໍ່ໄດ້ຮຽນຜ່ານໂຮງຮຽນນາຍທະຫານ.

**ມາດຕາ 4 (ໃໝ່) ນະໂຍບາຍຂອງລັດຕໍ່ນາຍທະຫານ**

ລັດ ຊຸກຍູ້, ສົ່ງເສີມ, ກໍ່ສ້າງ ແລະ ປະຕິບັດນະໂຍບາຍ ຕໍ່ນາຍທະຫານ ໃຫ້ເຕີບໃຫຍ່ເຂັ້ມແຂງຮອບດ້ານ, ມີຄວາມໜັກແໜ້ນທາງດ້ານການເມືອງ ແນວຄິດ, ຄວາມຮູ້, ຄວາມສາມາດ, ລະດັບວິທະຍາສາດ, ເຕັກໂນໂລຊີ, ສ້າງເງື່ອນໄຂ ໃຫ້ນາຍທະຫານໄດ້ເຄື່ອນໄຫວວຽກງານ ແລະ ເບິ່ງແຍງຊີວິດການເປັນຢູ່ທາງດ້ານວັດຖຸ, ຈິດໃຈ ເພື່ອຮັບປະກັນໃຫ້ນາຍທະຫານ ເຮັດສຳເລັດໜ້າທີ່ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 5 (ໃໝ່) ຫຼັກການພື້ນຖານໃນການຄຸ້ມຄອງນາຍທະຫານ**

ການຄຸ້ມຄອງນາຍທະຫານ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຢູ່ພາຍໃຕ້ການຊີ້ນຳ, ນຳພາ, ບັນຊາ ເດັດຂາດ ໂດຍກົງ, ຮອບດ້ານ ຂອງພັກປະຊາຊົນປະຕິວັດລາວ, ຄະນະພັກກະຊວງປ້ອງກັນປະເທດ ແລະ ຄະນະພັກ, ຄະນະບັນຊາແຕ່ລະຂັ້ນ;

2. ຮັບປະກັນການເຄົາລົບ ແລະ ປະຕິບັດຖືກຕ້ອງ, ສອດຄ່ອງກັບແນວທາງ ນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຂອງກອງທັບ;

3. ລວມສູນປະຊາທິປະໄຕ, ເປັນເອກະພາບໃນທົ່ວກອງທັບ ບົນພື້ນຖານແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ປະສານສົມທົບແໜ້ນແຟ້ນກົມກຽວ ລະຫວ່າງກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ;

4. ກໍ່ສ້າງ, ບັນຈຸ, ສັບຊ້ອນ ນາຍທະຫານ ໃຫ້ມີຄຸນນະພາບ ແລະ ຖືກຕ້ອງຕາມຄວາມຮູ້ຄວາມສາມາດ;

5. ຮັກສາຄວາມລັບຂອງຊາດ ແລະ ຄວາມລັບການທະຫານຢ່າງເດັດຂາດ.

**ມາດຕາ 6 (ໃໝ່) ການປົກປ້ອງນາຍທະຫານ**

ນາຍທະຫານກອງທັບປະຊາຊົນລາວ ໄດ້ຮັບການປົກປ້ອງຕາມກົດໝາຍ ເມື່ອຖືກກ່າວຫາ, ຖືກຮ້ອງຟ້ອງ, ຖືກໃສ່ຮ້າຍ, ຖືກນາບຂູ່ ໃນເວລາເຄື່ອນໄຫວປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ ແລະ ຕາມການມອບໝາຍຂອງການຈັດຕັ້ງ.

**ມາດຕາ 7 (ໃໝ່) ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບຖັນແຖວນາຍທະຫານ ກອງທັບປະຊາຊົນລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ແລະ ປະເທດອື່ນ ກ່ຽວກັບວຽກງານພັດທະນານາຍທະຫານ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການຝຶກອົບຮົມ, ສໍາມະນາ, ທັດສະນະສຶກສາ ແລະ ການຍົກລະດັບຄວາມຮູ້ ຄວາມສາມາດທາງດ້ານວິຊາການ ຕາມການຕົກລົງຂອງການຈັດຕັ້ງ ເພື່ອກໍ່ສ້າງນາຍທະຫານ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ.

## ພາກທີ II
## ນາຍທະຫານກອງທັບປະຊາຊົນລາວ

### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຄວາມຮັບຜິດຊອບ, ສິດ ແລະ ພັນທະ ຂອງນາຍທະຫານ

**ມາດຕາ 9 (ປັບປຸງ) ທີ່ຕັ້ງ, ພາລະບົດບາດຂອງນາຍທະຫານ**

ນາຍທະຫານ ເປັນກໍາລັງຫຼັກແຫຼ່ງຂອງກອງທັບປະຊາຊົນລາວ.

ນາຍທະຫານ ມີພາລະບົດບາດ ຊີ້ນໍາ, ນໍາພາ, ບັນຊາ, ຄຸ້ມຄອງ, ຕິດຕາມ ກວດກາ, ສຶກສາອົບຮົມ, ຝຶກຝົນຮໍ່າຮຽນ, ກໍ່ສ້າງກໍາລັງ, ກຽມພ້ອມສູ້ຮົບ, ສູ້ຮົບ, ລ້ຽງດູທັບ ແລະ ຮັບປະກັນເຕັກນິກການທະຫານ ເພື່ອປົກປັກຮັກສາເອກະລາດ, ອໍານາດອະທິປະໄຕ, ຄວາມໝັ້ນຄົງຂອງຊາດ, ລະບອບປະຊາທິປະໄຕປະຊາຊົນ ແລະ ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ.

**ມາດຕາ 10 (ປັບປຸງ) ໜ້າທີ່ ຂອງນາຍທະຫານ**

ໜ້າທີ່ ຂອງນາຍທະຫານ ມີ ດັ່ງນີ້:

1. ປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການຂອງກອງທັບ, ຮັກສາຄວາມລັບຂອງລັດ, ຂອງກອງທັບຢ່າງເດັດຂາດ, ປະຕິບັດຄໍາສັ່ງຂອງຜູ້ບັນຊາ, ນໍາພາ ແລະ ການຈັດຕັ້ງຂັ້ນເທິງຂອງຕົນຢ່າງເຂັ້ມງວດ;

2. ກຽມພ້ອມສູ້ຮົບ ແລະ ສູ້ຮົບຢ່າງພິລະອາດຫານ ເພື່ອປົກປັກຮັກສາປະເທດຊາດ, ຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງ ຂອງລະບອບປະຊາທິປະໄຕ ປະຊາຊົນ, ປົກປັກຮັກສາຊັບສິນບັດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງລວມໝູ່ ແລະ ຂອງປະຊາຊົນລາວບັນດາເຜົ່າ;

3. ຕັ້ງໜ້າປັບປຸງ ແລະ ກໍ່ສ້າງກໍາລັງ ໃຫ້ໜັກແໜ້ນທາງດ້ານການເມືອງ ແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ມີທາດແທ້ປະຕິວັດ, ມີລະບຽບວິໄນເຂັ້ມງວດ ແລະ ມີແບບແຜນທັນສະໄໝ; ມີລະດັບວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ສິລະປະຍຸດ, ຍຸດທະວິທີໃນການສູ້ຮົບ ແລະ ມີຄວາມສາມາດປະຕິບັດສໍາເລັດໜ້າທີ່;

4. ກໍ່ສ້າງຮາກຖານການເມືອງ, ເຂົ້າຮ່ວມການພັດທະນາທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຊ່ວຍເຫຼືອປະຊາຊົນລາວບັນດາເຜົ່າ ເປັນຕົ້ນ ໃນເວລາເກີດໄພພິບັດ;

5. ຄຸ້ມຄອງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຂອງນາຍ ແລະ ພົນທະຫານ ບົນພື້ນຖານຍົກສູງຈິດໃຈເພິ່ງຕົນເອງ ກຸ້ມຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ກໍ່ສ້າງແນວຫຼັງພະລາທິການເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຕົນ;

6. ຄຸ້ມຄອງ, ປົກປັກຮັກສາ, ບົວລະບັດ ສ້ອມແປງ, ດັດແປງ ພາຫະນະ, ອາວຸດຍຸດໂທປະກອນເຕັກນິກການທະຫານ;

7. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ມີຄວາມສາມັກຄີເປັນເອກະພາບພາຍໃນກອງທັບ ແລະ ປະຊາຊົນ, ຕໍານິຕິຊົມ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຢູ່ພາຍໃນກົມກອງ ແລະ ລະຫວ່າງຂັ້ນລຸ່ມກັບຂັ້ນເທິງ ເພື່ອພ້ອມກັນກ້າວໜ້າ;

8. ຄົ້ນຄວ້າວິທະຍາສາດ-ເຕັກນິກ, ເຕັກໂນໂລຊີ ທາງດ້ານການທະຫານ;

9. ເປັນຜູ້ ສັງເກດການ, ເຈລະຈາ, ໄກ່ເກ່ຍຂໍ້ຂັດແຍ່ງລະຫວ່າງລັດກັບລັດ, ທີ່ປຶກສາ ແລະ ເປັນກຳລັງຮັກສາສັນຕິພາບ ຕາມການຕົກລົງຂອງລັດຖະບານ;

10. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 11 ຄວາມຮັບຜິດຊອບຂອງນາຍທະຫານ**

ນາຍທະຫານ ມີຄວາມຮັບຜິດຊອບ ຊີ້ນໍາ, ນໍາພາ, ບັນຊາ, ຄຸ້ມຄອງກົມກອງຂອງຕົນ, ປະຕິບັດແນວທາງ ນະໂຍບາຍ, ກົດໝາຍ, ລະບຽບການຂອງກອງທັບ, ມະຕິ, ຄໍາສັ່ງຂອງຂັ້ນເທິງຢ່າງເຂັ້ມງວດ ແລະ ມີຄວາມຮັບຜິດຊອບຕໍ່ຄໍາສັ່ງຂອງຕົນ.

ໃນຍາມສູ້ຮົບ ຕ້ອງປະຕິບັດຄໍາສັ່ງຂອງຜູ້ບັນຊາ ຢ່າງເຂັ້ມງວດ ແລະ ເດັດຂາດ.

**ມາດຕາ 12 (ປັບປຸງ) ສິດ ແລະ ພັນທະຂອງນາຍທະຫານ**

ນາຍທະຫານມີ ສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ທີ່ຈໍາເປັນ;

2. ຕໍານິຕິຊົມ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ປະກອບຄໍາຄິດຄໍາເຫັນ ໃນການປັບປຸງກໍ່ສ້າງກົມກອງ;

3. ໄດ້ຮັບການ ສຶກສາຍົກລະດັບ ທາງດ້ານການເມືອງ, ການທະຫານ, ພະລາທິການ, ເຕັກນິກການທະຫານ ແລະ ວິຊາສະເພາະອື່ນ;

4. ຕົກລົງ ແລະ ຕັດສິນບັນຫາຕ່າງໆ ຕາມຂອບເຂດຄວາມຮັບຜິດຊອບ ແລະ ຕາມການມອບໝາຍ;

5. ໄດ້ຮັບນະໂຍບາຍ ຕາມລະບຽບການ ຂອງກອງທັບປະຊາຊົນລາວ.

ນາຍທະຫານ ມີພັນທະ ດັ່ງນີ້:

1. ຄົ້ນຄວ້າ, ກໍາແໜ້ນ ແລະ ເປັນແບບຢ່າງ ປະຕິບັດແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງກອງທັບປະຊາຊົນລາວ;

2. ກຽມພ້ອມສູ້ຮົບ, ສູ້ຮົບຢ່າງພິລະອາດຫານ, ຍອມເສຍສະລະຊີວິດ ເພື່ອຜົນປະໂຫຍດຂອງປະເທດຊາດ ແລະ ຂອງປະຊາຊົນລາວບັນດາເຜົ່າ;

3. ເປັນເຈົ້າການປະຕິບັດໜ້າທີ່ ປົກປັກຮັກສາລະບອບ ປະຊາທິປະໄຕປະຊາຊົນ ແລະ ເຂົ້າຮ່ວມໃນການສ້າງສາພັດທະນາປະເທດຊາດ;

4. ຝຶກຝົນ, ຫຼໍ່ຫຼອມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ເປັນແບບຢ່າງໃນທຸກວຽກງານ; ຝຶກແອບຮ່ຳຮຽນ, ຍົກສູງລະດັບຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ການທະຫານ, ເສດຖະກິດ, ເຕັກນິກ, ເຕັກໂນໂລຊີ, ວັດທະນະທຳ-ສັງຄົມ ແລະ ວິຊາສະເພາະອື່ນ ເພື່ອເຮັດສຳເລັດໜ້າທີ່ ທີ່ໄດ້ຮັບມອບໝາຍ;

5. ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ, ປະຕິບັດຄຳສັ່ງຂອງຜູ້ບັນຊາຢ່າງເຂັ້ມງວດ ແລະ ເດັດຂາດ;

6. ເຄົາລົບນັບຖືຮີດຄອງປະເພນີອັນດີງາມ ຂອງຊາດ ແລະ ຂອງປະຊາຊົນລາວບັນດາເຜົ່າ.

ນອກຈາກນີ້ແລ້ວ ນາຍທະຫານ ກໍຍັງມີ ສິດ ແລະ ພັນທະຄືກັນກັບພົນລະເມືອງລາວ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

## ໝວດທີ 2
## ປະເພດ, ທີ່ມາ, ເງື່ອນໄຂ ແລະ ມາດຕະຖານ, ການນຳພາ, ບັນຊາ ແລະ ການກໍ່ສ້າງ ນາຍທະຫານ

### ມາດຕາ 13 (ປັບປຸງ) ປະເພດນາຍທະຫານ

ປະເພດນາຍທະຫານກອງທັບປະຊາຊົນລາວ ມີ ດັ່ງນີ້:

1. ນາຍທະຫານການເມືອງ ຊຶ່ງແມ່ນ ນາຍທະຫານ ທີ່ເຮັດໜ້າທີ່ວຽກງານພັກ, ວຽກງານການເມືອງ ໃນກອງທັບ;

2. ນາຍທະຫານເສນາທິການ ຊຶ່ງແມ່ນ ນາຍທະຫານ ທີ່ເຮັດໜ້າທີ່ບັນຊາ, ຄຸ້ມຄອງ, ປັບປຸງ, ກໍ່ສ້າງກຳລັງທາງດ້ານການທະຫານ ກຽມພ້ອມສູ້ຮົບ ແລະ ສູ້ຮົບມີໄຊ;

3. ນາຍທະຫານພະລາທິການ ຊຶ່ງແມ່ນ ນາຍທະຫານ ທີ່ເຮັດໜ້າທີ່ຮັບປະກັນ ໃນການລ້ຽງດູທັບ;

4. ນາຍທະຫານເຕັກນິກ ຊຶ່ງແມ່ນ ນາຍທະຫານ ທີ່ເຮັດໜ້າທີ່ຮັບປະກັນເຕັກນິກການທະຫານ;

5. ນາຍທະຫານວິຊາສະເພາະອື່ນ ຊຶ່ງແມ່ນ ນາຍທະຫານທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ 1, 2, 3 ແລະ ຂໍ້ 4 ຂອງມາດຕານີ້.

### ມາດຕາ 14 (ປັບປຸງ) ທີ່ມາຂອງນາຍທະຫານ

ທີ່ມາຂອງນາຍທະຫານ ມີ ດັ່ງນີ້:

1. ນາຍສິບ ຜູ້ທີ່ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ, ສູ້ຮົບຢ່າງພິລະອາດຫານ, ຫ້າວຫັນ ແລະ ມີຜົນງານດີເດັ່ນ ໃນການປະຕິບັດໜ້າທີ່ວຽກງານຕ່າງໆ;

2. ນາຍສິບທີ່ຮຽນຈົບວິຊາສະເພາະໃດໜຶ່ງ ລະດັບຊັ້ນກາງຂຶ້ນໄປ ຢູ່ໃນ ແລະ ນອກກອງທັບ ທັງພາຍໃນ ແລະ ຕ່າງປະເທດ;

3. ພະນັກງານ-ລັດຖະກອນ ທີ່ຖືກເລືອກເຟັ້ນຕາມຄວາມຕ້ອງການເຂົ້າມາເຮັດໜ້າທີ່ຮັບໃຊ້ໃນກອງທັບ;

4. ນັກສຶກສາ ນອກກອງທັບ ທີ່ຮຽນຈົບຊັ້ນກາງຂຶ້ນໄປ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບການຄັດເລືອກເຂົ້າເປັນທະຫານອາຊີບ.

**ມາດຕາ 15 (ປັບປຸງ) ເງື່ອນໄຂ ແລະ ມາດຕະຖານຂອງນາຍທະຫານ**

ເງື່ອນໄຂ ແລະ ມາດຕະຖານຂອງນາຍທະຫານ ມີດັ່ງນີ້:

1. ຕ້ອງເປັນຄົນເຊື້ອຊາດ ແລະ ສັນຊາດລາວ, ມີອາຍຸແຕ່ ຊາວເອັດປີ ຂຶ້ນໄປ, ມີຊີວະປະຫວັດຈະ ແຈ້ງ ທີ່ກຳເນີດຈາກຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານບັນດາເຜົ່າ, ບໍ່ຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ;

2. ມີທັດສະນະຫຼັກໝັ້ນການເມືອງຂອງຊົນຊັ້ນກຳມະກອນໜັກແໜ້ນ, ມີຄວາມຈົ່ງຮັກພັກດີຕໍ່ພັກ, ລັດ ແລະ ປະຊາຊົນ, ມີອຸດົມການສັງຄົມນິຍົມ, ມີນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຈຳແນກໄດ້ມິດ ແລະ ສັດຕູ ຢ່າງຈະແຈ້ງ, ມີຄຸນສົມບັດສິນທຳປະຕິວັດ, ມີສະຕິຕໍ່ການຈັດຕັ້ງ, ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງກອງທັບຢ່າງເຂັ້ມງວດ, ມີນໍ້າໃຈຕໍ່ສູ້ເດັດດ່ຽວຢ່າງພິລະອາດຫານ, ມີຄວາມເສຍສະລະສູງ ແລະ ທົນທານໜຽວແໜ້ນ;

3. ມີຄວາມຮູ້ພື້ນຖານທິດສະດີມາກ-ເລນິນ, ແນວຄິດໄກສອນພົມວິຫານ, ມີຄວາມສາມາດກຳແໜ້ນ ແລະ ຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງກອງທັບ;

4. ມີຄວາມຮູ້ເປັນລະບົບກ່ຽວກັບວິຊາການທະຫານ, ວິຊາສະເພາະເຕັກນິກ, ໄດ້ຜ່ານການທົດສອບໃນວຽກງານຕົວຈິງ;

5. ມີສຸຂະພາບສົມບູນ ແລະ ແຂງແຮງດີ.

ສຳລັບນາຍທະຫານບັນຊາແຕ່ລະຂັ້ນ ຕ້ອງໄດ້ຮຽນຜ່ານ ຫຼື ຈົບ ຫຼັກສູດ ດັ່ງນີ້:

1. ຂັ້ນໝວດ, ກອງຮ້ອຍ, ກອງພັນນ້ອຍ ຫຼື ທຽບເທົ່າ ຕ້ອງໄດ້ຮຽນຜ່ານ ຫຼື ຈົບຫຼັກສູດການເມືອງ, ການທະຫານ, ພະລາທິການ ຫຼື ເຕັກນິກ ຂັ້ນໝວດ, ກອງຮ້ອຍ, ກອງພັນນ້ອຍ ຂຶ້ນໄປ;

2. ຂັ້ນກອງພັນໃຫຍ່, ກອງພົນນ້ອຍ, ກອງພົນໃຫຍ່, ເຫຼົ່າຮົບ, ກອງບັນຊາການທະຫານແຂວງ, ນະຄອນຫຼວງ, ເຂດທະຫານ ແລະ ທຽບເທົ່າຂຶ້ນໄປ ຕ້ອງໄດ້ຮຽນຜ່ານ ຫຼື ຈົບຫຼັກສູດ ການເມືອງ, ການທະຫານ, ພະລາທິການ ຫຼື ເຕັກນິກ ຂັ້ນກອງພັນໃຫຍ່, ກອງພົນ ຂຶ້ນໄປ.

**ມາດຕາ 16 (ປັບປຸງ) ການນຳພາ, ບັນຊານາຍທະຫານ**

ນາຍທະຫານກອງທັບປະຊາຊົນລາວ ຢູ່ພາຍໃຕ້ການນຳພາ ເດັດຂາດ, ໂດຍກົງ, ຮອບດ້ານຂອງພັກປະຊາຊົນປະຕິວັດລາວ.

ປະທານປະເທດ ເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສຸກ ທັງເປັນຜູ້ບັນຊາການສູງສຸດ ຂອງນາຍທະຫານກອງທັບປະຊາຊົນລາວ.

ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຮອງປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສຸກ ທັງເປັນຜູ້ປະຈຳການ ແລະ ເປັນຜູ້ນຳພາ, ບັນຊາການສູງສຸດ ກອງທັບປະຊາຊົນລາວ.

ບັນດາຫົວໜ້າກົມໃຫຍ່ ຫຼື ທຽບເທົ່າ ເປັນຜູ້ນຳພາ, ບັນຊາ, ຄຸ້ມຄອງ, ກວດກາ ການຈັດຕັ້ງປະຕິບັດໜ້າທີ່ ໂດຍກົງ ຕາມເຫຼົ່າຮົບວິຊາສະເພາະ ຕໍ່ນາຍທະຫານກອງທັບປະຊາຊົນລາວ.

ບັນດາຫົວໜ້າກອງບັນຊາການທະຫານແຂວງ, ນະຄອນຫຼວງ ເປັນຮອງປະທານຄະນະກຳມະການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ ນະຄອນຫຼວງ ແລະ ເປັນຜູ້ນຳພາ, ບັນຊາ, ຄຸ້ມຄອງ, ກວດກາການຈັດຕັ້ງປະຕິບັດໜ້າທີ່ ໂດຍກົງ ຕໍ່ນາຍທະຫານ ຢູ່ໃນຂົງເຂດຄວາມຮັບຜິດຊອບ.

### ມາດຕາ 17 (ປັບປຸງ) ການກໍ່ສ້າງນາຍທະຫານ

ການກໍ່ສ້າງນາຍທະຫານ ແມ່ນຄວາມຮັບຜິດຊອບຂອງພາກສ່ວນຕ່າງໆ ດັ່ງນີ້:

1. ພັກ, ລັດຖະບານ ມີຄວາມຮັບຜິດຊອບໂດຍກົງຕໍ່ການບຳລຸງ, ກໍ່ສ້າງນາຍທະຫານກອງທັບປະຊາຊົນລາວ;

2. ຄະນະພັກ, ຄະນະບັນຊາຂັ້ນຕ່າງໆຢູ່ໃນກອງທັບ ມີຄວາມຮັບຜິດຊອບໂດຍກົງ ໃນການຈັດຕັ້ງບຳລຸງ, ກໍ່ສ້າງນາຍທະຫານທີ່ຂຶ້ນກັບຕົນໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ປະຊາຊົນ, ມີຄວາມຮູ້ຄວາມສາມາດ, ມີລະບຽບວິໄນ ແລະ ແບບແຜນທັນສະໄໝ;

3. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ, ສະຖາບັນການສຶກສາພາກລັດ, ເອກະຊົນ ແລະ ພົນລະເມືອງລາວ ມີພັນທະປະກອບສ່ວນກໍ່ສ້າງ, ບຳລຸງ ແລະ ສຶກສາອົບຮົມນາຍທະຫານ ກອງທັບປະຊາຊົນລາວ.

## ໝວດທີ 3
## ລະບົບຂັ້ນ ແລະ ຊັ້ນຂອງນາຍທະຫານກອງທັບປະຊາຊົນລາວ

### ມາດຕາ 18 ຂັ້ນ ແລະ ຊັ້ນ ຂອງນາຍທະຫານ

ນາຍທະຫານກອງທັບປະຊາຊົນລາວ ປະກອບມີ ສາມຂັ້ນ ຄື ຂັ້ນນາຍຮ້ອຍ, ຂັ້ນນາຍພັນ ແລະ ຂັ້ນນາຍພົນ ແລະ ສິບຊັ້ນ ດັ່ງນີ້:

ຂັ້ນນາຍຮ້ອຍ ມີ ສາມ ຊັ້ນ:
- ຊັ້ນ ຮ້ອຍຕີ;
- ຊັ້ນ ຮ້ອຍໂທ;
- ຊັ້ນ ຮ້ອຍເອກ.

ຂັ້ນນາຍພັນມີ ສາມ ຊັ້ນ:
- ຊັ້ນ ພັນຕີ;
- ຊັ້ນ ພັນໂທ;
- ຊັ້ນ ພັນເອກ.

ຂັ້ນນາຍພົນມີ ສີ່ ຊັ້ນ:
- ຊັ້ນ ພົນຈັດຕະວາ;
- ຊັ້ນ ພົນຕີ;

- ຊັ້ນ ພົນໂທ;
- ຊັ້ນ ພົນເອກ.

**ມາດຕາ 19 (ປັບປຸງ) ອາຍຸກະສຽນປະດັບຊັ້ນ, ເລື່ອນຊັ້ນ, ປະດັບທຽບຊັ້ນ, ເລື່ອນທຽບຊັ້ນ ໃຫ້ນາຍທະຫານ ແຕ່ລະຂັ້ນ**

ອາຍຸກະສຽນສູງສຸດ ໃນການປະດັບຊັ້ນ, ເລື່ອນຊັ້ນ, ປະດັບທຽບຊັ້ນ, ເລື່ອນທຽບຊັ້ນ ຕໍ່ນາຍທະຫານປະຈໍາການ ແຕ່ລະຂັ້ນມີ ດັ່ງນີ້:

1. ຂັ້ນນາຍຮ້ອຍບໍ່ໃຫ້ເກີນ ສີ່ສິບ ປີ;
2. ຂັ້ນນາຍພັນບໍ່ໃຫ້ເກີນ ຫ້າສິບ ປີ;
3. ຂັ້ນນາຍພົນບໍ່ໃຫ້ເກີນ ຫົກສິບ ປີ.

**ມາດຕາ 20 (ປັບປຸງ) ການປະດັບຊັ້ນ ແລະ ປະດັບທຽບຊັ້ນ ເປັນນາຍທະຫານ**

ການປະດັບຊັ້ນ ແລະ ປະດັບທຽບຊັ້ນ ເປັນນາຍທະຫານ ໃຫ້ປະຕິບັດ ດັ່ງນີ້:

1. ນາຍສິບ ທີ່ໄດ້ຮຽນຈົບວິຊາສະເພາະ ຈາກບັນດາວິທະຍາຄານ ແລະ ໂຮງຮຽນ ຂອງກອງທັບ ທັງພາຍໃນ ແລະ ຕ່າງປະເທດ ຈະໄດ້ຮັບການປະດັບຊັ້ນ ເປັນນາຍທະຫານ ຕາມວຸດທິການສຶກສາ:
   - ຊັ້ນກາງ ປະດັບ ຊັ້ນຮ້ອຍຕີ;
   - ຊັ້ນສູງ ຂຶ້ນໄປ ປະດັບຊັ້ນ ຮ້ອຍໂທ.

2. ນາຍສິບທີ່ໄດ້ຮຽນຈົບວິຊາສະເພາະ ນອກກອງທັບ ທັງພາຍໃນ ແລະ ຕ່າງປະເທດ ຕາມແຜນກໍ່ສ້າງຂອງກອງທັບ ພາຍຫຼັງຮຽນຈົບມາຮັບໃຊ້ ຢູ່ໃນກອງທັບ ຕາມສາຍວິຊາສະເພາະ ເປັນເວລາ ຫົກເດືອນ ຈະໄດ້ຮັບການຄົ້ນຄວ້າປະດັບທຽບຊັ້ນ ເປັນນາຍທະຫານ ຕາມວຸດທິການສຶກສາ:
   - ຊັ້ນກາງ ປະດັບທຽບ ຊັ້ນຮ້ອຍຕີ;
   - ຊັ້ນສູງ ຂຶ້ນໄປ ປະດັບທຽບ ຊັ້ນຮ້ອຍໂທ.

3. ນາຍສິບທີ່ມີຜົນງານດີເດັ່ນໃນການສູ້ຮົບ ຫຼື ໃນການປະຕິບັດໜ້າທີ່ວຽກງານອື່ນ ຈະໄດ້ຮັບການປະດັບຊັ້ນ ຮ້ອຍຕີ ຫຼື ຮ້ອຍໂທ ຕາມຄວາມເໝາະສົມ;

4. ນັກສຶກສາ ທີ່ໄດ້ຮຽນຈົບວິຊາສະເພາະ ທັງພາຍໃນ ແລະ ຕ່າງປະເທດ ທີ່ຖືກເລືອກເຟັ້ນຕາມຄວາມຕ້ອງການ ຂອງໜ້າທີ່ວຽກງານໃນກອງທັບ ຕາມສາຍວິຊາສະເພາະທີ່ໄດ້ຮຽນມາ ຊຶ່ງໄດ້ຜ່ານການຮັບໃຊ້ໃນກອງທັບ ເປັນໄລຍະເວລາ ສອງປີຂຶ້ນໄປ ແລະ ຕ້ອງໄດ້ຮັບການບໍາລຸງວິຊາການທະຫານ ຈຶ່ງມີສິດສະເໜີປະດັບທຽບຊັ້ນ ເປັນນາຍທະຫານ ຕາມວຸດທິການສຶກສາ:
   - ຊັ້ນກາງ ປະດັບທຽບ ຊັ້ນຮ້ອຍຕີ;
   - ຊັ້ນສູງ ຂຶ້ນໄປ ປະດັບທຽບ ຊັ້ນຮ້ອຍໂທ.

5. ພະນັກງານ-ລັດຖະກອນ ທີ່ຖືກເລືອກເຟັ້ນຕາມຄວາມຕ້ອງການ ເຂົ້າມາເຮັດໜ້າທີ່ຮັບໃຊ້ໃນກອງທັບ ຕາມສາຍວິຊາສະເພາະ ຈະໄດ້ຮັບການທຽບຊັ້ນ ຕາມຊັ້ນ, ຂັ້ນເງິນເດືອນ ທີ່ຍົກຍ້າຍມາຈາກປົກຄອງ ແລະ ອີງຕາມການຕົກລົງໃຫ້ຕໍາແໜ່ງໃນກອງທັບ.

**ມາດຕາ 21 ສິດຕົກລົງກ່ຽວກັບຊັ້ນນາຍທະຫານ**

ສິດຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ທຽບຊັ້ນ ແລະ ປົດຊັ້ນ ນາຍທະຫານ ມີ ດັ່ງນີ້:

1. ປະທານປະເທດ ເປັນຜູ້ຕົກລົງ ປະດັບຊັ້ນ, ເລື່ອນຊັ້ນ ແລະ ປົດຊັ້ນ ຂັ້ນນາຍພົນ ຕາມການສະເໜີຂອງນາຍົກລັດຖະມົນຕີ;

2. ນາຍົກລັດຖະມົນຕີ ເປັນຜູ້ຕົກລົງ ປະດັບຊັ້ນ, ເລື່ອນຊັ້ນ ແລະ ປົດຊັ້ນ ພັນເອກ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນປະເທດ;

3. ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຜູ້ຕົກລົງ ປະດັບຊັ້ນ, ເລື່ອນຊັ້ນ, ທຽບຊັ້ນ ແລະ ປົດຊັ້ນຮ້ອຍເອກ, ພັນຕີ ແລະ ພັນໂທ ຕາມການສະເໜີຂອງຫົວໜ້າກົມໃຫຍ່ການເມືອງກອງທັບ;

4. ຫົວໜ້າກົມໃຫຍ່ການເມືອງກອງທັບ ເປັນຜູ້ຕົກລົງ ປະດັບຊັ້ນ, ເລື່ອນຊັ້ນ, ທຽບຊັ້ນ, ປົດຊັ້ນຮ້ອຍຕີ ແລະ ຮ້ອຍໂທ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ.

**ມາດຕາ 22 ເງື່ອນໄຂການເລື່ອນຊັ້ນ ນາຍທະຫານ**

ການເລື່ອນຊັ້ນນາຍທະຫານ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເຖິງກຳນົດເວລາພິຈາລະນາການເລື່ອນຊັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້;

2. ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ ຫຼື ມີຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ;

3. ມີເງື່ອນໄຂ ແລະ ມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15, 19 ແລະ 23 ຂອງກົດໝາຍສະບັບນີ້.

ສຳລັບຊັ້ນຂອງນາຍທະຫານ ທີ່ເຮັດໜ້າທີ່ວິຊາສະເພາະ ຫຼື ວິຊາການ ທີ່ບໍ່ມີຕຳແໜ່ງ ໃຫ້ເລື່ອນຕາມມາດຕາ 23 ຂອງກົດໝາຍສະບັບນີ້ ສູງສຸດບໍ່ໃຫ້ເກີນພັນໂທ.

ສຳລັບຊັ້ນຂອງນາຍທະຫານ ທີ່ເຮັດໜ້າທີ່ວຽກງານພິເສດ ຢູ່ເຂດຫຍຸ້ງຍາກທຸລະກັນດານ, ກົມກອງເຫຼົ່າຮົບເອກະລາດ ແລະ ດ່ານຮົບ ຈະສູງກວ່າຕຳແໜ່ງ ທີ່ໄດ້ກຳນົດໄວ້ໃນມາດຕາ 25 ກໍໄດ້ ແຕ່ບໍ່ໃຫ້ເກີນ ໜຶ່ງຊັ້ນ.

**ມາດຕາ 23 (ປັບປຸງ) ກຳນົດເວລາ ການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ນາຍທະຫານ**

ການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ນາຍທະຫານ ໃຫ້ປະຕິບັດຕາມກຳນົດເວລາ ດັ່ງນີ້:

1. ຊັ້ນຮ້ອຍຕີ ຂຶ້ນ ຮ້ອຍໂທ ກຳນົດ ສາມ ປີ ຂຶ້ນໄປ;
2. ຊັ້ນ ຮ້ອຍໂທ ຂຶ້ນ ຮ້ອຍເອກ ກຳນົດ ສາມ ປີ ຂຶ້ນໄປ;
3. ຊັ້ນ ຮ້ອຍເອກ ຂຶ້ນ ພັນຕີ ກຳນົດ ສີ່ ປີ ຂຶ້ນໄປ;
4. ຊັ້ນ ພັນຕີ ຂຶ້ນ ພັນໂທ ກຳນົດ ສີ່ ປີ ຂຶ້ນໄປ;
5. ຊັ້ນ ພັນໂທ ຂຶ້ນ ພັນເອກ ກຳນົດ ສີ່ ປີ ຂຶ້ນໄປ.

ການເລື່ອນຊັ້ນ ພັນເອກ ຂຶ້ນຊັ້ນນາຍພົນ, ນາຍພົນຂຶ້ນນາຍພົນຕາມລຳດັບຊັ້ນແມ່ນບໍ່ມີກຳນົດເວລາໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ.

ໄລຍະເວລາທີ່ນາຍທະຫານສຶກສາຢູ່ໂຮງຮຽນຕ່າງໆ ກໍໃຫ້ຄິດໄລ່ໃສ່ກຳນົດເວລາການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ.

ນາຍທະຫານທີ່ມີຜົນງານດີເດັ່ນໃນການສູ້ຮົບ, ໃນການປະຕິບັດໜ້າທີ່ຢູ່ເຂດຫຍຸ້ງຍາກທຸລະກັນດານ ຫຼື ໜ້າທີ່ພິເສດ ຈະໄດ້ຮັບການເລື່ອນຊັ້ນ, ເລື່ອນທຽບຊັ້ນ ຫຼື ຂ້າມຊັ້ນ ກ່ອນເວລາ ທີ່ໄດ້ກໍານົດໄວ້.

ໃນກໍລະນີທີ່ຮອດກໍານົດເວລາການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນແລ້ວ ແຕ່ບໍ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້ ຈະບໍ່ທັນໄດ້ເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ແຕ່ຈະມີການພິຈາລະນາໄປແຕ່ລະປີ ໂດຍບໍ່ໃຫ້ເກີນໜຶ່ງຮອບຂອງກໍານົດເວລາການເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ຂອງແຕ່ລະຊັ້ນ, ຖ້າຫາກບໍ່ໄດ້ເລື່ອນຊັ້ນແລ້ວ ຈະໄດ້ຍົກຂັ້ນເງິນເດືອນຂຶ້ນໜຶ່ງຂັ້ນ ແລະ ອາດຈະຍົກຍ້າຍຜູ້ກ່ຽວໄປເຮັດໜ້າທີ່ໃໝ່ຕາມຄວາມສາມາດ ຫຼື ໃຫ້ຮັບບໍານານ ຫຼື ເງິນອຸດໜູນ ຕາມລະບຽບການ.

ນາຍທະຫານທີ່ຍົກຍ້າຍໄປເຮັດໜ້າທີ່ຢູ່ຝ່າຍພົນລະເຮືອນ ເມື່ອກັບຄືນກອງທັບ ຈະໄດ້ພິຈາລະນາເລື່ອນຊັ້ນ ແລະ ເລື່ອນທຽບຊັ້ນ ຫຼື ຂ້າມຊັ້ນ ຕາມຄວາມເໝາະສົມ ແຕ່ຕ້ອງມີເງື່ອນໄຂ, ມາດຕະຖານຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້.

## ໝວດທີ 4
## ຕໍາແໜ່ງນາຍທະຫານກອງທັບປະຊາຊົນລາວ

**ມາດຕາ 24 (ປັບປຸງ) ຕໍາແໜ່ງບັນຊາ ຂອງນາຍທະຫານ**

ຕໍາແໜ່ງບັນຊາ ຂອງນາຍທະຫານ ກອງທັບປະຊາຊົນລາວ ປະກອບມີຂັ້ນ ດັ່ງນີ້:

1. ຂັ້ນກະຊວງປ້ອງກັນປະເທດ:
   - ລັດຖະມົນຕີ ແລະ ຮອງລັດຖະມົນຕີ;
   - ຫົວໜ້າ ແລະ ຮອງຫົວໜ້າ ກົມໃຫຍ່;
   - ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງວ່າການກະຊວງ;
   - ຫົວໜ້າ ແລະ ຮອງຫົວໜ້າກົມ ຂຶ້ນກັບກົມໃຫຍ່ ແລະ ຫ້ອງວ່າການກະຊວງ;
   - ຫົວໜ້າ ແລະ ຮອງຫົວໜ້າ ວິທະຍາຄານ, ໂຮງຮຽນຊັ້ນສູງ, ຊັ້ນກາງ;
   - ຫົວໜ້າ ແລະ ຮອງຫົວໜ້າ ພະແນກ ຂຶ້ນກັບກົມ ຂອງກົມໃຫຍ່ ແລະ ຫ້ອງວ່າການກະຊວງ;
   - ຫົວໜ້າ ແລະ ຮອງຫົວໜ້າ ອົງການ ແລະ ກົມກອງ ທຽບເທົ່າ.
2. ຂັ້ນເຂດທະຫານ:
   - ຫົວໜ້າ ແລະ ຮອງຫົວໜ້າ ເຂດທະຫານ;
   - ຫົວໜ້າ ແລະ ຮອງຫົວໜ້າ ກົມ;
   - ຫົວໜ້າ ແລະ ຮອງຫົວໜ້າ ພະແນກ.
3. ຂັ້ນກອງພົນໃຫຍ່:
   - ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການກອງພົນໃຫຍ່;
   - ຫົວໜ້າ ແລະ ຮອງຫົວໜ້າຫ້ອງ;

- ຫົວໜ້າ ແລະ ຮອງຫົວໜ້າພະແນກ.

4. ຂັ້ນກອງພົນນ້ອຍ:
   - ຫົວໜ້າ ແລະ ຮອງຫົວໜ້າ ກອງພົນນ້ອຍ;
   - ຫົວໜ້າ ແລະ ຮອງຫົວໜ້າຫ້ອງ;
   - ຫົວໜ້າ ແລະ ຮອງຫົວໜ້າພະແນກ.
5. ຂັ້ນກອງບັນຊາການເຫຼົ່າຮົບ:
   - ຫົວໜ້າ ແລະ ຮອງຫົວໜ້າ ກອງບັນຊາການເຫຼົ່າຮົບ;
   - ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງ;
   - ຫົວໜ້າ ແລະ ຮອງຫົວໜ້າ ພະແນກ.
6. ຂັ້ນກອງພັນໃຫຍ່:
   - ຫົວໜ້າ ແລະ ຮອງຫົວໜ້າກອງພັນໃຫຍ່;
   - ຫົວໜ້າ ແລະ ຮອງຫົວໜ້າ ພະແນກ;
   - ຫົວໜ້າ ຂະແໜງ.
7. ຂັ້ນກອງພັນນ້ອຍ:
   - ຫົວໜ້າ ແລະ ຮອງຫົວໜ້າ ກອງພັນນ້ອຍ;
   - ຫົວໜ້າ ແລະ ຮອງຫົວໜ້າ ກອງຮ້ອຍ;
   - ຫົວໜ້າ ແລະ ຮອງຫົວໜ້າ ໝວດ.
8. ຂັ້ນແຂວງ:
   - ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການທະຫານ ແຂວງ, ນະຄອນຫຼວງ;
   - ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງ;
   - ຫົວໜ້າ ແລະ ຮອງຫົວໜ້າພະແນກ.
9. ຂັ້ນເມືອງ:
   - ຫົວໜ້າ ແລະ ຮອງຫົວໜ້າ ກອງບັນຊາການທະຫານ ເມືອງ, ເທດສະບານ, ນະຄອນ;
   - ຫົວໜ້າ ແລະ ຮອງຫົວໜ້າ ພະແນກ;
   - ຫົວໜ້າຂະແໜງ.

**ມາດຕາ 25 (ປັບປຸງ) ການກຳນົດຊັ້ນໃສ່ຕຳແໜ່ງບັນຊາ ຂອງນາຍທະຫານ**

ການກຳນົດຊັ້ນໃສ່ຕຳແໜ່ງບັນຊາ ຂອງນາຍທະຫານ ມີ ດັ່ງນີ້:

1. ຂັ້ນໜຶ່ງ: ລັດຖະມົນຕີກະຊວງປ້ອງກັນປະເທດ ຊັ້ນ ພົນໂທ ຫຼືພົນເອກ;
2. ຂັ້ນສອງ: ຮອງລັດຖະມົນຕີ ຫົວໜ້າກົມໃຫຍ່ການເມືອງກອງທັບ, ຫົວໜ້າກົມໃຫຍ່ເສນາທິການກອງທັບ ຊັ້ນ ພົນໂທ ຫຼື ພົນເອກ;

3. ຂັ້ນສາມ: ຫົວໜ້າກົມໃຫຍ່ພະລາທິການກອງທັບ, ຫົວໜ້າກົມໃຫຍ່ເຕັກນິກກອງທັບ, ຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ, ຫົວໜ້າວິທະຍາຄານປ້ອງກັນຊາດ ໄກສອນພົມວິຫານ, ຮອງຫົວໜ້າກົມໃຫຍ່ການເມືອງກອງທັບ, ຮອງຫົວໜ້າກົມໃຫຍ່ເສນາທິການກອງທັບ ຊັ້ນ ພົນຈັດຕະວາ ຫຼື ພົນຕີ;

4. ຂັ້ນສີ່: ຮອງຫົວໜ້າກົມໃຫຍ່ພະລາທິການກອງທັບ, ຮອງຫົວໜ້າກົມໃຫຍ່ເຕັກນິກກອງທັບ, ຮອງຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ, ຫົວໜ້າຫ້ອງການຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສູນກາງ, ຫົວໜ້າກົມ 213, ຫົວໜ້າອົງການໄອຍະການທະຫານຂັ້ນສູງ, ປະທານສານທະຫານຂັ້ນສູງ, ຫົວໜ້າສະຖາບັນວິທະຍາສາດປ້ອງກັນຊາດ,ຫົວໜ້າສະຖາບັນການຮ່ວມມືສາກົນປ້ອງກັນຊາດ, ຫົວໜ້າເຂດທະຫານ ຊັ້ນ ພົນຈັດຕະວາ ຫຼື ພົນຕີ;

5. ຂັ້ນຫ້າ: ຫົວໜ້າກອງພົນໃຫຍ່, ຫົວໜ້າກົມ, ຫົວໜ້າກອງບັນຊາການທະຫານເຫຼົ່າຮົບ, ຮອງຫົວໜ້າວິທະຍາຄານປ້ອງກັນຊາດ ໄກສອນພົມວິຫານ, ຮອງຫົວໜ້າຫ້ອງການຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສູນກາງ, ຮອງຫົວໜ້າກົມ 213, ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຮອງປະທານສານທະຫານຂັ້ນສູງ, ຫົວໜ້າຫ້ອງການຊາວໜຸ່ມ, ຫົວໜ້າຫ້ອງການສະຫະພັນແມ່ຍິງ, ຫົວໜ້າຫ້ອງການກຳມະບານ, ຫົວໜ້າກອງບັນຊາການທະຫານແຂວງ, ນະຄອນຫຼວງ, ຫົວໜ້າຫ້ອງການກົມໃຫຍ່, ຫົວໜ້າວິທະຍາຄານ, ຮອງຫົວໜ້າສະຖາບັນວິທະຍາສາດປ້ອງກັນຊາດ, ຮອງຫົວໜ້າສະຖາບັນການຮ່ວມມືສາກົນປ້ອງກັນຊາດ, ຮອງຫົວໜ້າເຂດທະຫານ, ທີ່ປຶກສາທູດດ້ານການທະຫານ, ຫົວໜ້າບັນດາອົງການ ແລະ ກົມກອງທຽບເທົ່າ ຊັ້ນ ພັນເອກ ຫຼື ພົນຈັດຕະວາ;

6. ຂັ້ນຫົກ: ຫົວໜ້າກອງພົນນ້ອຍ, ຮອງຫົວໜ້າກົມ, ຮອງຫົວໜ້າກອງບັນຊາການທະຫານເຫຼົ່າຮົບ, ຮອງຫົວໜ້າກອງພົນໃຫຍ່, ຫົວໜ້າກົມຂຶ້ນກັບເຂດທະຫານ, ຮອງຫົວໜ້າກອງບັນຊາການທະຫານແຂວງ, ນະຄອນຫຼວງ, ຮອງຫົວໜ້າຫ້ອງການກົມໃຫຍ່, ຫົວໜ້າອົງການໄອຍະການທະຫານພາກ, ປະທານສານທະຫານພາກ, ຮອງຫົວໜ້າວິທະຍາຄານ, ຫົວໜ້າຄະນະວິຊາ ວິທະຍາຄານປ້ອງກັນຊາດ ໄກສອນພົມວິຫານ, ຫົວໜ້າຫ້ອງການເມືອງ, ຫົວໜ້າຫ້ອງການບໍລິຫານຂອງບັນດາກົມໃຫຍ່ ແລະ ຫ້ອງວ່າການກະຊວງ,ຮອງທີ່ປຶກສາທູດດ້ານການທະຫານ, ຮອງຫົວໜ້າຫ້ອງການຊາວໜຸ່ມ, ຮອງຫົວໜ້າຫ້ອງການສະຫະພັນແມ່ຍິງ, ຮອງຫົວໜ້າຫ້ອງການກຳມະບານ, ຫົວໜ້າຫ້ອງ ກອງພົນ, ກອງບັນຊາການທະຫານແຂວງ, ນະຄອນຫຼວງ, ຮອງຫົວໜ້າບັນດາອົງການ ແລະ ກົມກອງ ທຽບເທົ່າ ຊັ້ນ ພັນໂທ ຫຼື ພັນເອກ;

7. ຂັ້ນເຈັດ: ຫົວໜ້າກອງພັນໃຫຍ່, ຮອງຫົວໜ້າກອງພົນນ້ອຍ, ຮອງຫົວໜ້າຫ້ອງ ກອງພົນ, ກອງບັນຊາການທະຫານ ແຂວງ, ນະຄອນຫຼວງ, ຫົວໜ້າພະແນກຂອງບັນດາກົມໃຫຍ່ ແລະ ຫ້ອງວ່າການກະຊວງ, ຮອງຫົວໜ້າກົມຂຶ້ນກັບເຂດທະຫານ, ຫົວໜ້າກອງບັນຊາການທະຫານເມືອງ, ເທດສະບານ, ນະຄອນ, ຮອງຫົວໜ້າອົງການໄອຍະການທະຫານພາກ, ຮອງປະທານສານທະຫານພາກ, ຮອງຫົວໜ້າຄະນະວິຊາ ວິທະຍາຄານປ້ອງກັນຊາດໄກສອນພົມວິຫານ, ຮອງຫົວໜ້າຫ້ອງການ ເມືອງ, ຮອງຫົວໜ້າຫ້ອງການບໍລິຫານ ຂອງບັນດາກົມໃຫຍ່ ແລະ ຫ້ອງວ່າການກະຊວງ, ບັນດາອົງການ ແລະ ກົມກອງທຽບເທົ່າ ຊັ້ນ ພັນໂທ ຫຼື ພັນເອກ;

8. ຂັ້ນແປດ: ຫົວໜ້າກອງພັນນ້ອຍ, ຮອງຫົວໜ້າກອງພັນໃຫຍ່, ຮອງຫົວໜ້າກອງບັນຊາການທະຫານ ເມືອງ, ເທດສະບານ, ນະຄອນ, ຮອງຫົວໜ້າພະແນກຂອງບັນດາກົມໃຫຍ່ ແລະ ຫ້ອງວ່າການກະຊວງ, ຫົວໜ້າພະແນກ ເຂດທະຫານ, ກອງພົນ, ກອງບັນຊາການທະຫານ ແຂວງ, ນະຄອນຫຼວງ, ກອງພັນໃຫຍ່, ຫົວໜ້າຄະນະວິຊາບັນດາວິທະຍາຄານ, ບັນດາອົງການ ແລະ ກົມກອງ ທຽບເທົ່າ ຊັ້ນ ພັນຕີ ຫຼື ພັນໂທ;

9. ຂັ້ນເກົ້າ: ຫົວໜ້າກອງຮ້ອຍ, ຮອງຫົວໜ້າກອງພັນນ້ອຍ, ຫົວໜ້າຂະແໜງກອງພັນໃຫຍ່, ຮອງຫົວໜ້າພະແນກເຂດທະຫານ, ກອງພົນ, ກອງບັນຊາການທະຫານ ແຂວງ, ນະຄອນຫຼວງ, ຮອງຫົວໜ້າຄະນະວິຊາບັນດາວິທະຍາຄານ, ຜູ້ຊ່ວຍວຽກພະແນກອົງການກະຊວງ, ບັນດາອົງການ ແລະ ກົມກອງ ທຽບເທົ່າ ຊັ້ນ ພັນຕີ ຫຼື ພັນໂທ;

10. ຂັ້ນສິບ: ຫົວໜ້າໝວດ, ຮອງຫົວໜ້າກອງຮ້ອຍ, ຜູ້ຊ່ວຍວຽກບັນດາພະແນກ, ບັນດາອົງການ ແລະ ກົມກອງ ທຽບເທົ່າ ຊັ້ນ ຮ້ອຍເອກ ຫຼື ພັນຕີ;

11. ຂັ້ນສິບເອັດ: ຮອງຫົວໜ້າໝວດ, ຜູ້ຊ່ວຍວຽກຂະແໜງ, ບັນດາອົງການ ແລະ ກົມກອງ ທຽບເທົ່າ ຊັ້ນຮ້ອຍຕີ ຫາ ຮ້ອຍເອກ.

**ມາດຕາ 26 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕາແໜ່ງ ນາຍທະຫານ**

ຜູ້ມີສິດຕົກລົງແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງນາຍທະຫານ ມີ ດັ່ງນີ້:

1. ລັດຖະມົນຕີກະຊວງປ້ອງກັນປະເທດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ພາຍຫຼັງທີ່ສະພາແຫ່ງຊາດຮັບຮອງ;

2. ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າ ແລະ ຮອງຫົວໜ້າກົມໃຫຍ່, ຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ, ຫົວໜ້າ ແລະ ຮອງຫົວໜ້າເຂດທະຫານ, ຫົວໜ້າວິທະຍາຄານປ້ອງກັນຊາດໄກສອນພົມວິຫານ, ຫົວໜ້າກົມ 213, ຫົວໜ້າຫ້ອງການຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສູນກາງ, ຫົວໜ້າກອງພົນ, ຫົວໜ້າກອງບັນຊາການທະຫານ ແຂວງ, ນະຄອນຫຼວງ, ຫົວໜ້າກອງບັນຊາການເຫຼົ່າຮົບ ແລະ ທຽບເທົ່າ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນປະເທດ;

3. ຫົວໜ້າອົງການໄອຍະການທະຫານຂັ້ນສູງ, ປະທານສານທະຫານຂັ້ນສູງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ພາຍຫຼັງທີ່ໄດ້ຮັບການເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ;

4. ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຫົວໜ້າ ແລະ ຮອງຫົວໜ້າອົງການໄອຍະການທະຫານພາກ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີ ຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ພາຍຫຼັງໄດ້ຮັບການເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ;

5. ຮອງປະທານສານທະຫານຂັ້ນສູງ, ປະທານ ແລະ ຮອງປະທານສານທະຫານພາກ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງໄດ້ຮັບຄຳສະເໜີຂອງປະທານສານທະຫານຂັ້ນສູງ ແລະ ຄຳເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ;

6. ທີ່ປຶກສາ ແລະ ຮອງທີ່ປຶກສາ ທູດດ້ານການທະຫານຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງການຕ່າງປະເທດ ຕາມການສະເໜີຂອງລັດຖະມົນຕີກະຊວງປ້ອງກັນປະເທດ;

7. ຫົວໜ້າ ແລະ ຮອງຫົວໜ້າກົມ, ຮອງຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ, ຮອງຫົວໜ້າວິທະຍາຄານປ້ອງກັນຊາດໄກສອນ ພົມວິຫານ, ຫົວໜ້າ ແລະ ຮອງຫົວໜ້າວິທະຍາຄານ, ຮອງຫົວໜ້າກອງພົນ, ຮອງຫົວໜ້າກອງບັນຊາການທະຫານ ແຂວງ, ນະຄອນຫຼວງ, ຫົວໜ້າ ແລະ ຮອງຫົວໜ້າກອງພົນໃຫຍ່, ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການທະຫານ ເມືອງ, ເທດສະບານ, ນະຄອນ, ຫົວໜ້າ, ຮອງຫົວໜ້າກົມກອງທຽບເທົ່າ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງປ້ອງກັນປະເທດ ຕາມການສະເໜີຂອງຫົວໜ້າກົມໃຫຍ່ການເມືອງກອງທັບ;

8. ຫົວໜ້າ ແລະ ຮອງຫົວໜ້າພະແນກ ຂອງບັນດາອົງການຂັ້ນຕ່າງໆ, ຫົວໜ້າ ແລະ ຮອງຫົວໜ້າກອງພົນນ້ອຍ, ຫົວໜ້າຂະແໜງຂອງກອງພົນໃຫຍ່ເອກະລາດ, ຫົວໜ້າ ແລະ ຮອງຫົວໜ້າກົມກອງທຽບເທົ່າ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍຫົວໜ້າກົມໃຫຍ່ການເມືອງກອງທັບ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ;

9. ຫົວໜ້າກົມໃຫຍ່ເສນາທິການກອງທັບ, ຫົວໜ້າກົມໃຫຍ່ພລາທິການກອງທັບ, ຫົວໜ້າກົມໃຫຍ່ເຕັກນິກກອງທັບ, ຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ ແລະ ຫົວໜ້າກົມກອງທຽບເທົ່າເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຂັ້ນກອງຮ້ອຍ ແລະ ຂັ້ນຂະແໜງທີ່ຂຶ້ນກັບຕົນຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ;

10.ຫົວໜ້າເຂດທະຫານ, ຫົວໜ້າກອງບັນຊາການເຫຼົ່າຮົບ, ຫົວໜ້າວິທະຍາຄານປ້ອງກັນຊາດໄກສອນພົມວິຫານ, ຫົວໜ້າວິທະຍາຄານ, ຫົວໜ້າກອງພົນໃຫຍ່, ຫົວໜ້າກອງພົນນ້ອຍ, ຫົວໜ້າກອງບັນຊາການທະຫານແຂວງ, ນະຄອນຫຼວງ ແລະ ຫົວໜ້າກົມກອງທຽບເທົ່າ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຂັ້ນຂະແໜງ, ກອງຮ້ອຍ, ໝວດ, ໝູ່ທີ່ຂຶ້ນກັບຕົນ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ;

11. ຫົວໜ້າກອງພົນໃຫຍ່ເອກະລາດ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຂັ້ນກອງຮ້ອຍ, ໝວດ ແລະ ໝູ່ທີ່ຂຶ້ນກັບຕົນ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ.

**ມາດຕາ 27 ການປົດ ແລະ ແຕ່ງຕັ້ງນາຍທະຫານ ໃຫ້ດຳລົງຕຳແໜ່ງຊົ່ວຄາວ**

ໃນກໍລະນີຮີບດ່ວນ ນາຍທະຫານທີ່ມີຕຳແໜ່ງແຕ່ຂັ້ນຫົວໜ້າກອງຮ້ອຍເອກະລາດ, ຫົວໜ້າກອງພົນນ້ອຍເອກະລາດ, ຫົວໜ້າກອງພົນໃຫຍ່ ຫຼື ທຽບເທົ່າຂຶ້ນໄປ ມີສິດປົດຕຳແໜ່ງຊົ່ວຄາວຂອງນາຍທະຫານທີ່ຂຶ້ນກັບຕົນທີ່ບໍ່ປະຕິບັດຄຳສັ່ງ ຊຶ່ງຈະກໍ່ຄວາມເສຍຫາຍໃຫ້ແກ່ກົມກອງ ແລະ ຜົນປະໂຫຍດຂອງຊາດ ແລ້ວ

ແຕ່ງຕັ້ງຜູ້ໃໝ່ຂຶ້ນຮັບຜິດຊອບແທນ, ພ້ອມກັນນັ້ນ ກໍຕ້ອງລາຍງານໃຫ້ຂັ້ນເທິງຖັດຄືນຊາບ ແລະ ສະເໜີຂັ້ນເທິງແຕ່ງຕັ້ງເປັນທາງການຢ່າງຮີບດ່ວນ.

**ມາດຕາ 28 ການງົດຕໍາແໜ່ງ ແລະ ການໃຫ້ຕໍາແໜ່ງ ຕໍ່າກວ່າຊັ້ນນາຍທະຫານ**

ການງົດຕໍາແໜ່ງຂອງນາຍທະຫານຈະປະຕິບັດໄດ້ ໃນກໍລະນີ ດັ່ງນີ້:

1. ກົງຈັກການຈັດຕັ້ງມີການປ່ຽນແປງ ຊຶ່ງບໍ່ຈໍາເປັນຕ້ອງມີຕໍາແໜ່ງທີ່ກ່ຽວຂ້ອງນັ້ນອີກ;
2. ນາຍທະຫານບໍ່ຄົບເງື່ອນໄຂທີ່ຈະຮັບຜິດຊອບຕໍາແໜ່ງນັ້ນ;
3. ນາຍທະຫານທີ່ເຖິງອາຍຸກະສຽນ ຮັບເບ້ຍບໍານານ.

ນາຍທະຫານອາດຈະຖືກໃຫ້ຕໍາແໜ່ງຕໍ່າກວ່າຊັ້ນ ໃນກໍລະນີ ດັ່ງນີ້:

1. ມີການເພີ່ມທະວີການບັນຊາ ໃນການປະຕິບັດໜ້າທີ່ພິເສດ;
2. ມີການປ່ຽນແປງການຈັດຕັ້ງ ຂອງກົມກອງ;
3. ມີການສັບຊ້ອນໃສ່ຕໍາແໜ່ງໃໝ່ທີ່ແທດເໝາະກັບຄວາມສາມາດ ແລະ ສຸຂະພາບຂອງນາຍທະຫານ.

## ພາກທີ III
## ການປະຕິບັດນະໂຍບາຍ, ຂໍ້ຫ້າມ
## ແລະ ມາດຕະການ ຕໍ່ນາຍທະຫານກອງທັບປະຊາຊົນລາວ
### ໝວດທີ 1
### ການປະຕິບັດນະໂຍບາຍ

**ມາດຕາ 29 (ໃໝ່) ການລາພັກ ແລະ ການພັກທາງລັດຖະການ**

ການລາພັກ ແມ່ນການຂໍອະນຸຍາດຢຸດການປະຕິບັດໜ້າທີ່ຊົ່ວຄາວ ຂອງນາຍທະຫານ.

ການລາພັກມີ ດັ່ງນີ້:

1. ການລາພັກປະຈໍາປີ ເປັນເວລາ ສິບຫ້າວັນ ໂດຍບໍ່ນັບວັນພັກທາງລັດຖະການ. ໃນກໍລະນີ ມີພາວະສຸກເສີນ ຫຼື ສົງຄາມ ບໍ່ອະນຸຍາດໃຫ້ມີການລາພັກ, ສໍາລັບນາຍທະຫານທີ່ກໍາລັງລາພັກຢູ່ນັ້ນ ຕ້ອງໄດ້ກັບຄືນກົມກອງດ່ວນ;
2. ການລາພັກປິ່ນປົວສຸຂະພາບ ຖ້າຫາກເກີນ ຫົກເດືອນ ໃຫ້ແຕ່ງຕັ້ງຜູ້ໃໝ່ຮັກສາການແທນ;
3. ການພັກລໍຖ້າການສັບຊ້ອນວຽກງານ ສູງສຸດ ບໍ່ໃຫ້ເກີນ ສອງເດືອນ ແຕ່ການຈັດຕັ້ງຕ້ອງຮີບຮ້ອນສັບຊ້ອນຜູ້ກ່ຽວ ເຂົ້າເຮັດວຽກງານຕາມຕໍາແໜ່ງງານທີ່ເໝາະສົມ;
4. ການລາພັກໃນກໍລະນີອື່ນ:
   - ການລາພັກແຕ່ງດອງ ບໍ່ໃຫ້ເກີນເຈັດວັນ;
   - ການລາພັກເບິ່ງແຍງເມຍອອກລູກ ຫຼື ຫຼຸລູກ ບໍ່ໃຫ້ເກີນ ສິບຫ້າວັນ;

- ການລາພັກເບິ່ງແຍງເວລາເຈັບເປັນ ຫຼື ເສຍຊີວິດຂອງເມຍ ຫຼື ຜົວ, ພໍ່, ແມ່ ແລະ ລູກ ຂອງ ນາຍທະຫານ ບໍ່ໃຫ້ເກີນ ສິບຫ້າວັນ;

- ການລາພັກໄປຢ້ຽມຢາມຜົວ ຫຼື ເມຍ ທີ່ຖືກແຕ່ງຕັ້ງໄປປະຈຳການ ຫຼື ຄົ້ນຄວ້າຮໍ່າຮຽນຢູ່ຕ່າງປະເທດ ແຕ່ ໜຶ່ງປີ ຂຶ້ນໄປ ໃຫ້ລາພັກຕາມລະບຽບການ.

ສຳລັບການພັກທາງລັດຖະການນັ້ນ ໃຫ້ປະຕິບັດຕາມກົດໝາຍ ຫຼື ແຈ້ງການທາງລັດຖະການ.

**ມາດຕາ 30 (ໃໝ່) ການລາພັກອອກລູກ**

ການລາພັກອອກລູກ ຂອງນາຍທະຫານເພດຍິງ ໃຫ້ປະຕິບັດ ດັ່ງນີ້:

1. ການລາພັກອອກລູກ ເປັນເວລາ ຫ້າ ເດືອນ, ໃນກໍລະນີທີ່ອອກລູກແຝດ ໃຫ້ພັກຕື່ມອີກ ສອງເດືອນ;

2. ການລາພັກຫຼູລູກ ຊຶ່ງຖືພາໄດ້ ສອງ ຫາ ຫົກ ເດືອນ ໃຫ້ພັກ ສາມ ເດືອນ, ຖ້າຫຼູລູກຊຶ່ງຖືພາໄດ້ເກີນກວ່າ ຫົກ ເດືອນ ໃຫ້ພັກ ຫ້າ ເດືອນ;

3. ການລາພັກອອກລູກ ດ້ວຍການຜ່າຕັດ ໃຫ້ພັກ ຫົກ ເດືອນ.

**ມາດຕາ 31 (ໃໝ່) ເງື່ອນໄຂການແຕ່ງດອງ**

ນອກຈາກເງື່ອນໄຂການແຕ່ງດອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຄອບຄົວແລ້ວ ນາຍທະຫານທີ່ຈະສ້າງຄອບຄົວ ຕ້ອງມີອາຍຸການເຂົ້າທະຫານ ສາມ ປີ ຂຶ້ນໄປ.

**ມາດຕາ 32 (ໃໝ່) ການຮັບອຸດໜູນເທື່ອດຽວ**

ນາຍທະຫານ ທີ່ບໍ່ມີເງື່ອນໄຂຮັບອຸດໜູນບຳນານ ຈະໄດ້ຮັບອຸດໜູນເທື່ອດຽວ ຕາມລະບຽບການ.

**ມາດຕາ 33 (ໃໝ່) ອາຍຸກະສຽນຮັບບຳນານ**

ອາຍຸກະສຽນຮັບບຳນານ ຂອງນາຍທະຫານທີ່ປະຈຳການ ໃຫ້ປະຕິບັດ ດັ່ງນີ້:

1. ຫົກສິບ ປີ ແລະ ມີອາຍຸການ ຊາວຫ້າ ປີ ຂຶ້ນໄປ ສຳລັບນາຍທະຫານເພດຊາຍ ທີ່ປະຈຳການຢູ່ສຳນັກງານ, ອົງການກະຊວງປ້ອງກັນປະເທດ;

2. ຫ້າສິບຫ້າ ປີ ແລະ ມີອາຍຸການຊາວ ຫ້າ ປີ ຂຶ້ນໄປ ສຳລັບນາຍທະຫານເພດຍິງ ທີ່ປະຈຳການຢູ່ສຳນັກງານ, ອົງການກະຊວງປ້ອງກັນປະເທດ, ໃນກໍລະນີພິເສດ ຫາກມີຄວາມຮຽກຮ້ອງຕ້ອງການ ບໍ່ໃຫ້ເກີນ ຫົກສິບ ປີ;

3. ຫ້າສິບເຈັດ ປີ ແລະ ມີອາຍຸການ ຊາວຫ້າ ປີ ຂຶ້ນໄປ ສຳລັບນາຍທະຫານທີ່ປະຈຳການຢູ່ກົມກອງສູ້ຮົບ, ເຂດຫຍຸ້ງຍາກທຸລະກັນດານ;

4. ຫ້າສິບ ປີ ສຳລັບນາຍທະຫານ ທີ່ເຮັດວຽກກັບທາດເບື່ອ, ທາດເຄມີ ສິບຫ້າ ປີ ຢ່າງຕໍ່ເນື່ອງ.

ນາຍທະຫານ ເມື່ອເຖິງກະສຽນອາຍຸຮັບບຳນານ ແລະ ຄົບປີການແລ້ວ ຕ້ອງໄດ້ຮັບບຳນານ ໂດຍບໍ່ຈຳເປັນຕ້ອງຂຽນຄຳຮ້ອງ ຊຶ່ງກົມໃຫຍ່ການເມືອງກອງທັບ ແລະ ກົມກອງທີ່ກ່ຽວຂ້ອງ ຈະເປັນຜູ້ແຈ້ງໃຫ້ຮູ້ກ່ອນລ່ວງໜ້າ ຫົກ ເດືອນ.

ສຳລັບ ນາຍທະຫານຊັ້ນ ພັນເອກ ທີ່ປະຈຳການຢູ່ສຳນັກງານ, ອົງການກະຊວງປ້ອງກັນປະເທດ ສູງສຸດບໍ່ໃຫ້ເກີນ ຫົກສິບສາມ ປີ, ຊັ້ນນາຍພົນ ສູງສຸດ ບໍ່ໃຫ້ເກີນ ຫົກສິບຫ້າ ປີ ໃນກໍລະນີພິເສດອາດຈະເກີນ ຫົກສິບຫ້າ ປີ ໂດຍການຕົກລົງຂອງກົມການເມືອງສູນກາງພັກ.

## ມາດຕາ 34 (ໃໝ່) ການຍົກຂັ້ນເງິນເດືອນ

ການຍົກຂັ້ນເງິນເດືອນໃຫ້ນາຍທະຫານ ປະຈຳການ ແລະ ຮັບບຳນານ ປະຕິບັດ ດັ່ງນີ້:

1. ກຳນົດເວລາຄົ້ນຄວ້າພິຈາລະນາ ເລື່ອນຊັ້ນໄດ້ແກ່ຍາວໄປອີກໜຶ່ງຮອບ ແຕ່ບໍ່ສາມາດເລື່ອນຊັ້ນໄດ້;
2. ບໍ່ມີເງື່ອນໄຂໄປຍົກລະດັບໃຫ້ສູງຂຶ້ນ ເພື່ອຮັບຕຳແໜ່ງໃໝ່ສູງກວ່າເກົ່າ;
3. ຍົກໄດ້ແຕ່ຄັ້ງດຽວ ຕາມລຳດັບຂັ້ນເທົ່ານັ້ນ ແລະ ບໍ່ໄດ້ຍົກຂ້າມຊັ້ນ;
4. ຍົກໃຫ້ນາຍທະຫານແຕ່ ຊັ້ນຮ້ອຍຕີ ເຖິງຊັ້ນ ພັນເອກ.

ສຳລັບ ນາຍທະຫານ ທີ່ບໍ່ທັນໄດ້ຮັບການຍົກຂັ້ນເງິນເດືອນໃນເວລາປະຈຳການ ເມື່ອເຂົ້າຮັບບຳນານ ຈະໄດ້ຮັບການຍົກຂັ້ນເງິນເດືອນ ຂຶ້ນອີກ ໜຶ່ງຂັ້ນ.

## ມາດຕາ 35 (ໃໝ່) ການເສຍສະລະຊີວິດ

ນາຍທະຫານ ທີ່ເຮັດໜ້າທີ່ສູ້ຮົບ ແລະ ຮັບໃຊ້ຢູ່ສະໜາມຮົບຢ່າງພິລະອາດຫານ ຫາກເສຍສະລະຊີວິດ ຈະໄດ້ຮັບການເລື່ອນຊັ້ນໃຫ້ຕື່ມສາມຊັ້ນ ແລະ ຄິດໄລ່ເງິນອຸດໜູນເສຍຊີວິດຕາມຊັ້ນໃໝ່, ພ້ອມທັງເບິ່ງແຍງຄອບຄົວຂອງຜູ້ກ່ຽວຕາມລະບຽບການ ແລະ ມີນະໂຍບາຍ ໃຫ້ບຸລິມະສິດ ຮັບເອົາລູກຜູ້ທີ່ມີມາດຕະຖານ, ເງື່ອນໄຂເຂົ້າເປັນທະຫານ ຫຼື ອົງການຈັດຕັ້ງອື່ນຂອງລັດ ຕາມຄວາມເໝາະສົມ.

ສຳລັບນາຍທະຫານ ທີ່ເສຍຊີວິດໃນການປະຕິບັດໜ້າທີ່ທາງລັດຖະການ ຢູ່ເຂດຫຍຸ້ງຍາກທຸລະກັນດານ ຈະໄດ້ຮັບການເລື່ອນຊັ້ນຂຶ້ນ ໜຶ່ງຊັ້ນ ແລະ ຄິດໄລ່ເງິນອຸດໜູນເສຍຊີວິດຕາມຊັ້ນໃໝ່ ຕາມລະບຽບການ.

## ມາດຕາ 36 (ໃໝ່) ການເສຍອົງຄະ

ນາຍທະຫານ ທີ່ເສຍອົງຄະ ຍ້ອນຖືກບາດເຈັບຢູ່ສະໜາມຮົບ ແລະ ການເຄື່ອນໄຫວປະຕິບັດໜ້າທີ່ປ້ອງກັນຊາດ ຈະໄດ້ຮັບການປິ່ນປົວໂດຍບໍ່ເສຍຄ່າ ແລະ ໄດ້ຮັບນະໂຍບາຍຕາມລະບຽບການ.

## ມາດຕາ 37 ການຍ້ອງຍໍ ຕໍ່ນາຍທະຫານ

ນາຍທະຫານທີ່ມີຜົນງານດີເດັ່ນ ໃນການສູ້ຮົບ ຫຼື ການປະຕິບັດໜ້າທີ່ວຽກງານອື່ນ ຈະໄດ້ຮັບການຍ້ອງຍໍ ເຊັ່ນ ນາມມະຍົດວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ຫຼຽນໄຊ, ຫຼຽນກາ, ໃບຍ້ອງຍໍ, ການເລື່ອນຊັ້ນກ່ອນກຳນົດ ແລະ ນະໂຍບາຍອື່ນ ຕາມຄວາມເໝາະສົມ.

## ໝວດທີ 2
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 38 (ປັບປຸງ) ຂໍ້ຫ້າມ ຕໍ່ນາຍທະຫານ**

ຫ້າມ ນາຍທະຫານ ມີພຶດຕິກຳ ດັ່ງນີ້:

1. ລະເມີດ ຮີດຄອງປະເພນີອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ;
2. ອອກຄຳສັ່ງ, ລະບຽບການທີ່ຂັດກັບກົດໝາຍ;
3. ປະລະໜ້າທີ່ ແລະ ລະເມີດຄຳສັ່ງຂອງຂັ້ນເທິງ;
4. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;
5. ໃຊ້ອຳນາດເກີນຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ;
6. ຊື້-ຂາຍ, ໃຫ້ຜູ້ອື່ນຢືມ ຫຼື ນຳໃຊ້ອາວຸດເສິກ ເຊັ່ນ ປືນ, ລູກກະສຸນ, ໝາກແຕກ, ຊິ້ນສ່ວນອາວຸດເສິກ;
7. ຊື້-ຂາຍ, ໃຫ້ຜູ້ອື່ນຢືມ ຫຼື ນຳໃຊ້ເຄື່ອງແບບທະຫານ, ເອກະສານທາງການທະຫານ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການຂອງກອງທັບ.

**ມາດຕາ 39 (ໃໝ່) ມາດຕະການທາງດ້ານບໍລິຫານ**

ນາຍທະຫານທີ່ໄດ້ລະເມີດ ລະບຽບການ ຂອງກອງທັບປະຊາຊົນລາວ, ຄຳສັ່ງຂອງຜູ້ບັນຊາ ຈະຖືກລົງວິໄນທາງບໍລິຫານ ຕາມແຕ່ລະກໍລະນີ ເຊັ່ນ ຕຳນິ, ກ່າວເຕືອນ, ງົດການເລື່ອນຊັ້ນ, ງົດການຍ້ອງຍໍ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ, ປົດຊັ້ນ, ປົດອາວຸດ, ຖອດເຄື່ອງແບບ ແລະ ບັດປະຈຳຕົວ ນາຍທະຫານ, ໃຫ້ເງິນອຸດໜູນຕາມຊັ້ນທີ່ຍັງເຫຼືອ ຫຼື ໄລ່ອອກຈາກກອງທັບໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 40 (ໃໝ່) ມາດຕະການທາງດ້ານກົດໝາຍ**

ການປະຕິບັດມາດຕະການທາງດ້ານກົດໝາຍ ໃຫ້ປະຕິບັດ ດັ່ງນີ້:

1. ນາຍທະຫານ ທີ່ໄດ້ກະທຳຜິດທາງອາຍາ ແລະ ການກະທຳຜິດທາງທະຫານ ທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ ຈະຖືກລົງໂທດຕາມກົດໝາຍ;

2. ນາຍທະຫານ ທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບໃນສະຖານການກະທຳຜິດໂດຍເຈດຕະນາ ແຕ່ໜຶ່ງປີ ຂຶ້ນໄປ ໝົດສິດການເປັນນາຍທະຫານ ແລະ ບໍ່ໄດ້ຮັບນະໂຍບາຍໃດ. ໃນກໍລະນີການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ ຈະພິຈາລະນາຕາມຄວາມເໝາະສົມ.

3. ນາຍທະຫານ ທີ່ໄດ້ກໍ່ຄວາມເສຍຫາຍໃຫ້ແກ່ບຸກຄົນ ແລະ ການຈັດຕັ້ງອື່ນຈະໄດ້ຮັບຜິດຊອບໃຊ້ແທນເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ.

## ພາກທີ IV
## ການຄຸ້ມຄອງ, ຄວາມຮັບຜິດຊອບ
## ແລະ ການກວດກາ ຕໍ່ນາຍທະຫານກອງທັບປະຊາຊົນລາວ
### ໝວດທີ 1
### ການຄຸ້ມຄອງ ແລະ ຄວາມຮັບຜິດຊອບ

**ມາດຕາ 41 (ໃໝ່) ອົງການຄຸ້ມຄອງ ນາຍທະຫານ**

ອົງການຄຸ້ມຄອງນາຍທະຫານປະກອບດ້ວຍ:

1. ລັດຖະບານ;
2. ກະຊວງປ້ອງກັນປະເທດ;
3. ອົງການປົກຄອງທ້ອງຖິ່ນ.

**ມາດຕາ 42 (ປັບປຸງ) ຄວາມຮັບຜິດຊອບ ຂອງລັດຖະບານ ຕໍ່ນາຍທະຫານ**

ລັດຖະບານ ມີຄວາມຮັບຜິດຊອບ ຕໍ່ນາຍທະຫານ ດັ່ງນີ້:

1. ປະຕິບັດຫຼັກການລວມສູນ ເປັນເອກະພາບໃນການກໍ່ສ້າງ ແລະ ຄຸ້ມຄອງຖັນແຖວນາຍທະຫານ;
2. ສະເໜີອອກກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບການຄຸ້ມຄອງນາຍທະຫານກອງທັບປະຊາຊົນລາວ;
3. ຊີ້ນຳ, ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບນາຍທະຫານ;
4. ສະໜອງງົບປະມານ, ປະກອບວັດຖຸ, ພາຫະນະ ອາວຸດຍຸດໂທປະກອນ ເຕັກນິກການທະຫານ;
5. ຄົ້ນຄວ້າ ແລະ ນຳໃຊ້ບັນດານະໂຍບາຍຕ່າງໆ ຕໍ່ຖັນແຖວນາຍທະຫານ.

**ມາດຕາ 43 (ປັບປຸງ) ຄວາມຮັບຜິດຊອບ ຂອງກະຊວງປ້ອງກັນປະເທດ**

ກະຊວງປ້ອງກັນປະເທດ ມີຄວາມຮັບຜິດຊອບຕໍ່ລັດຖະບານ ກ່ຽວກັບການຄຸ້ມຄອງ, ບັນຊານາຍທະຫານ ດັ່ງນີ້:

1. ຄຸ້ມຄອງໂດຍກົງຢ່າງຮອບດ້ານຕໍ່ນາຍທະຫານ, ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ເພື່ອຄຸ້ມຄອງນາຍທະຫານ ຕາມພາລະບົດບາດຂອງຕົນ;
2. ກຳນົດ, ຈັດຕັ້ງປະຕິບັດແຜນການກໍ່ສ້າງ ແລະ ບຳລຸງນາຍທະຫານ ໃຫ້ເປັນລະບົບຄົບຊຸດ, ຮັບປະກັນດ້ານປະລິມານ ແລະ ຄຸນນະພາບ;

3. ຊີ້ນຳ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານພັກ, ວຽກງານການເມືອງ, ໂຄສະນາສຶກສາອົບຮົມການເມືອງ ແນວຄິດ, ແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງກອງທັບ;

4. ຈັດຕັ້ງ, ນຳໃຊ້, ຄຸ້ມຄອງປະຕິບັດນະໂຍບາຍ, ຍ້ອງຍໍ ແລະ ລົງວິໄນ ຕໍ່ນາຍທະຫານ;

5. ສ້າງແຜນງົບປະມານ ແລະ ນຳໃຊ້ງົບປະມານ, ວັດຖຸ, ພາຫະນະ, ອາວຸດຍຸດໂທປະກອບເຕັກນິກການທະຫານ;

6. ຊີ້ນຳ, ນຳພາ ແລະ ບັນຊານາຍທະຫານທັງສາມປະເພດກຳລັງ ກຳລັງຫຼວງ, ກຳລັງທ້ອງຖິ່ນ ແລະ ກອງຫຼອນ-ກອງປ້ອງກັນຕົວ;

7. ພິຈາລະນາ, ແກ້ໄຂຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳ ຂອງນາຍທະຫານ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 (ປັບປຸງ) ຄວາມຮັບຜິດຊອບຂອງບັນດາກະຊວງ ແລະ ອົງການຈັດຕັ້ງຕ່າງໆ**

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສະຖາບັນການສຶກສາຂັ້ນຕ່າງໆ ມີຄວາມຮັບຜິດຊອບ ຕໍ່ນາຍທະຫານ ດັ່ງນີ້:

1. ສຶກສາອົບຮົມ, ກໍ່ສ້າງ, ບຳລຸງ ແລະ ຍົກລະດັບວິຊາການ, ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ນາຍທະຫານ ເຮັດສຳເລັດໜ້າທີ່ຂອງຕົນ;

2. ຄົ້ນຄວ້າ, ສັບຊ້ອນນາຍທະຫານທີ່ຍົກຍ້າຍຈາກກອງທັບ ມາເຮັດໜ້າທີ່ຢູ່ຝ່າຍພົນລະເຮືອນຢ່າງ ເໝາະສົມ;

3. ຊ່ວຍເຫຼືອເບິ່ງແຍງທາງດ້ານວັດຖຸ, ຈິດໃຈ ແລະ ຊີວິດການເປັນຢູ່ຂອງນາຍທະຫານ ແລະ ຄອບຄົວ ເປັນຕົ້ນ ຄອບຄົວນາຍທະຫານຜູ້ເສຍສະລະຊີວິດ, ຜູ້ເສຍອົງຄະ, ພະນັກງານບຳນານ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະ ຄອບຄົວນາຍທະຫານ ທີ່ພວມປະຕິບັດໜ້າທີ່ພິເສດ, ຢູ່ເຂດທຸລະກັນດານ, ຫ່າງໄກຊອກຫຼີກ.

**ມາດຕາ 45 ຄວາມຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ກໍ່ສ້າງ, ບຳລຸງຍົກລະດັບດ້ານການສຶກສາ ແລະ ວິຊາການອື່ນ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ນາຍທະຫານເຮັດສຳເລັດໜ້າທີ່;

2. ຄົ້ນຄວ້າ, ສັບຊ້ອນນາຍທະຫານທີ່ຍົກຍ້າຍຈາກກອງທັບ ມາເຮັດໜ້າທີ່ຢູ່ຝ່າຍພົນລະເຮືອນຢ່າງເໝາະສົມ;

3. ຊ່ວຍເຫຼືອເບິ່ງແຍງທາງດ້ານວັດຖຸ, ຈິດໃຈ ແລະ ຊີວິດການເປັນຢູ່ຂອງນາຍທະຫານ ແລະ ຄອບຄົວ ເປັນຕົ້ນ ຄອບຄົວນາຍທະຫານຜູ້ເສຍສະລະຊີວິດ, ຜູ້ເສຍອົງຄະ, ພະນັກງານບຳນານ, ວິລະຊົນແຫ່ງ

ຊາດ, ນັກຮົບແຂ່ງຂັນ ແລະ ຄອບຄົວນາຍທະຫານທີ່ພວມປະຕິບັດໜ້າທີ່ພິເສດ, ຢູ່ເຂດທຸລະກັນດານ, ຫ່າງໄກຊອກຫຼີກ;

4. ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ພ້ອມກັບປະຊາຊົນລາວບັນດາເຜົ່າ ສຶກສາອົບຮົມ, ປະກອບຄໍາຄິດຄໍາເຫັນ, ຕໍານິຕິຊົມ, ຊ່ວຍເຫຼືອນາຍທະຫານ ໃນການປະຕິບັດໜ້າທີ່ ຢູ່ທ້ອງຖິ່ນຂອງຕົນ.

## ໝວດທີ 2
## ການກວດກາ

### ມາດຕາ 46 (ໃໝ່) ອົງການກວດກາຕໍ່ນາຍທະຫານ

ອົງການກວດກາຕໍ່ນາຍທະຫານກອງທັບປະຊາຊົນລາວ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ກະຊວງປ້ອງກັນປະເທດ, ກອງບັນຊາການທະຫານແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

### ມາດຕາ 47 (ໃໝ່) ເນື້ອໃນກວດກາ

ການກວດກາຕໍ່ນາຍທະຫານກອງທັບປະຊາຊົນລາວ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ໜ້າທີ່ຂອງນາຍທະຫານ;

2. ການປະຕິບັດກົດໝາຍ ແລະ ລະບຽບການຂອງກອງທັບ;

3. ການປະຕິບັດນະໂຍບາຍ ແລະ ການນໍາໃຊ້ມາດຕະການຕໍ່ນາຍທະຫານ ທີ່ລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 48 (ໃໝ່) ຮູບການກວດກາ

ຮູບການກວດກາ ມີ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປົກກະຕິ, ມີກໍານົດເວລາອັນແນ່ນອນ ແລະ ຕ້ອງປະຕິບັດຢ່າງໜ້ອຍ ສອງ ຄັ້ງຕໍ່ປີ;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການເມື່ອເຫັນວ່າ ມີຄວາມຈໍາເປັນ ແລະ ຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດໍາເນີນການກວດກາຕໍ່ນາຍທະຫານ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ພາກທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 49 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 50 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ສະບັບເລກທີ 07/ສພຊ, ລົງວັນທີ 22 ຕຸລາ 2004.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້